ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1802/ອຄ

ນະຄອນຫຼວງວຽງຈັນ, ວັນທີ 07 ທັນວາ 2022

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.
ເລື່ອງ: ແຈ້ງປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງ ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊາບ ແລະ ປະຕິບັດ ດັ່ງນີ້:

1. ປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 290 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບລົງ 200 ກີບ/ລິດ ແລະ ນ້ຳມັນກາຊວນ ປັບລົງ 80 ກີບ/ລິດ.
ລາຄາຕາມຕາຕະລາງລຸ່ມນີ້ ແມ່ນຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 24.980 | 24.690 | -290 | 1,16 | |
| 2 | ອຊ ທຳມະດາ | 19.920 | 19.720 | -200 | 1,00 | |
| 3 | ກາຊວນ | 19.100 | 19.020 | -80 | 1,42 | |

(ສຳລັບລາຄາຂາຍຍ່ອຍໃນເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).



สแกนด้วย CamScanner

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 08 ທັນວາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1162/ກຄພນ, ລົງວັນທີ 07 ທັນວາ 2022 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປໍ້າຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1761/ອຄ, ລົງວັນທີ 30 ພະຈິກ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ເຊັນແທນລັດຖະມົນຕີ
ຮອງລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ບຸນເຖິງ ດວງສະຫວັນ

<u>ບ່ອນສົ່ງ:</u>
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).



สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 08 ທັນວາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 24,690 | 19,720 | 19,020 |
| 2 | ແຂວງຜົ້ງສາລີ | 25,680 | 20,710 | 20,010 |
| 3 | ແຂວງຫຼວງນ້ຳທາ | 25,180 | 20,220 | 19,510 |
| 4 | ແຂວງອຸດົມໄຊ | 25,360 | 20,390 | 19,690 |
| 5 | ແຂວງບໍ່ແກ້ວ | 24,790 | 19,820 | 19,120 |
| 6 | ແຂວງຫຼວງພະບາງ | 25,190 | 20,230 | 19,530 |
| 7 | ແຂວງໄຊຍະບູລີ | 25,010 | 20,050 | 19,350 |
| 8 | ແຂວງຫົວພັນ | 25,190 | 20,230 | 19,530 |
| 9 | ແຂວງຊຽງຂວາງ | 24,880 | 19,910 | 19,210 |
| 10 | ແຂວງວຽງຈັນ | 24,690 | 19,720 | 19,020 |
| 11 | ແຂວງບໍລິຄຳໄຊ | 24,800 | 19,840 | 19,140 |
| 12 | ແຂວງຄຳມ່ວນ | 24,720 | 19,750 | 19,050 |
| 13 | ແຂວງສະຫວັນນະເຂດ | 24,720 | 19,750 | 19,050 |
| 14 | ແຂວງສາລະວັນ | 24,970 | 20,010 | 19,310 |
| 15 | ແຂວງຈຳປາສັກ | 24,750 | 19,780 | 19,080 |
| 16 | ແຂວງເຊກອງ | 24,970 | 20,010 | 19,310 |
| 17 | ແຂວງອັດຕະປື | 25,020 | 20,050 | 19,350 |
| 18 | ແຂວງໄຊສົມບູນ | 25,110 | 20,140 | 19,450 |

ນະຄອນຫຼວງວຽງຈັນ, ວັນທີ 07 ທັນວາ 2022

ຫົວໜ້າກົມ

ພູວຽງ ພົງສາ

สแกนด้วย CamScanner